ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ | ເລກທີ່ 019
ບ້ານຫັດສະດີ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ | ທີ່ນະຄອນຫຼວງວຽງຈັນ, ວັນທີ 01/03/2024
ໂທ: 020 52228888

ຂາເຂົ້າ | ສຳນັກງານອຳນວຍການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ
ເລກທີ: 1056
ວັນທີ: 4.3.24

# ໃບສະເໜີ

**ຮຽນ:** ທ່ານຫົວໜ້າຫ້ອງວ່າການ ນະຄອນຫຼວງວຽງຈັນ ທີ່ນັບຖືເປັນຢ່າງສູງ

**ເລື່ອງ:** ຂໍອະນຸຍາດແລ່ນສາຍທາງລົດເມ ໃນນະຄອນຫຼວງວຽງຈັນ ຕາມການສົ່ງເສີມການທ່ອງທ່ຽວ ຂອງລັດຖະບານ ເພື່ອໃຫ້ການສະດວກໂດຍສານ

- ອີງຕາມໃບທະບຽນວິສາຫະກິດ: ເລກທີ: 2224/ຈທວ ລົງວັນທີ: 29/11/2019
- ອີງຕາມໃບອະນຸຍາດດຳເນີນທຸລະກິດ ດ້ານຂົນສົ່ງ: ເລກທີ: 1465/ຍທຂ.ນວ ລົງວັນທີ: 27/12/2023
- ອີງຕາມໜັງສືແຈ້ງຕອບ ຍິນດີຮ່ວມມືຂອງລັດວິສາຫະກິດລົດເມ ນະຄອນຫຼວງວຽງຈັນ ເລກທີ: 0853/ລລມ.ນວ ລົງວັນທີ05/07/2023

ຂ້າພະເຈົ້າ ຜູ້ອຳນວຍການ ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ, ສະຖານທີ່ຕັ້ງຢູ່ ບ້ານຫັດສະດີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ມີຈຸດປະສົງສະເໜີມາຍັງທ່ານ ຂໍອະນຸຍາດແລ່ນສາຍທາງລົດເມ ໃນນະຄອນຫຼວງວຽງຈັນ ຕາມການສົ່ງເສີມການທ່ອງທ່ຽວ ຂອງລັດຖະບານ ເພື່ອໃຫ້ການສະດວກໂດຍສານ ດັ່ງມີຕາຕະລາງແລ່ນລົດລຸ່ມນີ້:

**ສາຍທີ 1:** ສະຖານີຕະຫຼາດເຊົ້າ - ຊຸ້ງຈ່ຽງ -ສະໜາມບິນ - ຕະຫຼາດສີໄຄ - ໂຮງໝໍປິ່ວຕາທົ່ງປົ່ງ - ຄິວລົດສາຍເໜືອ - ສີເກີດ - ຕະຫຼາດສົ່ງເປືອຍ ແລ້ວກັບຄືນສາຍທາງເກົ່າ ຫາ ສະຖານີຕະຫຼາດເຊົ້າ.

**ສາຍທີ 2:** ສະຖານີຕະຫຼາດເຊົ້າ - ຕະຫຼາດສີໄຄ - ໜອງແຕ່ງ ແລ້ວກັບຄືນສາຍທາງເກົ່າ.

**ສາຍທີ 3:** ສະຖານີຕະຫຼາດເຊົ້າ - ປະຕູໄຊ - ຫຼັກ 5 - ຄິວລົດສາຍໃຕ້ - ສະຖານີລົດໄຟ - ດອນໜູນ - ໂຄກສະຫອາດ ຫຼັກ21 ແລ້ວກັບຄືນສາຍທາງເກົ່າ.

ດັ່ງນັ້ນ ຈຶ່ງຂໍຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຊ່ອຍຕາມທາງຄວນດ້ວຍ.

ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ

ກະຊວງ ອຸດສາຫະກຳ ແລະ ການຄ້າ ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ Konsin Transportation Sole Co., Ltd ນະຄອນ ຫຼວງ ວຽງຈັນ

ອາຊື ກອນສິນ
Asue KONSIN

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນະຄອນຫຼວງວຽງຈັນ**

ຫ້ອງວ່າການ

ເລກທີ: 451 /ຫວນວ

ວັນທີ: 7 ມີນາ 2024

## ໜັງສືທາງລັດຖະການ

**ຮຽນ:** ທ່ານຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.

**ເລື່ອງ:** ຂໍອະນຸຍາດແລ່ນສາຍທາງລົດເມ ໃນນະຄອນຫຼວງວຽງຈັນ ຕາມການສົ່ງເສີມການທ່ອງທ່ຽວຂອງລັດຖະບານ ເພື່ອໃຫ້ການສະດວກໂດຍສານ.

- ອີງຕາມ ໃບສະເໜີຂອງບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ ສະບັບເລກທີ 019/, ລົງວັນທີ 01 ມີນາ 2024;
- ອີງຕາມ ການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ລົງວັນທີ 06 ມີນາ 2024.

ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີການຊີ້ນຳຂອງຂັ້ນເທິງ ມາຍັງທ່ານ ດັ່ງນີ້:

**"ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ, ແລ້ວລາຍງານຄືນການນຳນະຄອນຫຼວງວຽງຈັນ ເພື່ອພິຈາລະນາ"**

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມການຊີ້ນຳຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ**

ນະຄອນຫຼວງວຽງຈັນ ຫ້ອງວ່າການ

**ສອນໄຊ ສີສົມພັນ**

<u>ບ່ອນສົ່ງ:</u>

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທ່ານລະ | 1 ສະບັບ; |
| - ລັດວິສາຫະກິດລົດເມ ນະຄອນຫຼວງວຽງຈັນ | 1 ສະບັບ; |
| - ບໍລິສັດ ກອນສິນ ໂດຍສານ ຈຳກັດຜູ້ດຽວ | 1 ສະບັບ; |
| - ເກັບມ້ຽນສຳເນົາ | 2 ສະບັບ. |